ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກພາບ ວັດທະນາຖາວອນ
*********

# ພາລະບົດບາດ
# ໜ່ວຍງານວິຊາການຕ້ານພະຍາດວັນນະໂລກ

ໂດຍ
ຄະນະກຳມະການ ປະສານງານ ກອງທຶນໂລກ
2014

## I. ປະຫວັດຄວາມເປັນມາ:

ໃນການຕອບໂຕ້ຕໍ່ພະຍາດອັມມະໂລກທີ່ສູງໃນ ສປປ ລາວ (ອົງການອະນາໄມໂລກ ໄດ້ຄາດຄະເນອັດຕາ ການເປັນພະຍາດອັມມະໂລກ ໃນ ປີ 2012 ແມ່ນ 523/100,000, ການລາຍງານໃນທົ່ວໂລກ ຂອງພະຍາດອັມມະໂລກ ໂດຍອົງການອະນາໄມໂລກ ໃນປີ 2012), ລັດຖະບານຂອງ ສປປ ລາວ ໄດ້ໃຫ້ຄຳໝັ້ນສັນຍາທາງດ້ານການເມືອງຢ່າງຕໍ່ເນື່ອງ ແລະ ໃຫ້ການສະໜັບສະໜູນໂຄງການອັມມະໂລກແຫ່ງຊາດ ໃນການປະຕິບັດກິດຈະກຳ ເພື່ອຄວບຄຸມພະຍາດອັມມະໂລກ. ແຜນຍຸດທະສາດແຫ່ງຊາດ ຂອງໂຄງການອັມມະໂລກ ແມ່ນສອດຄ່ອງກັບຍຸດທະສາດຂອງພະຍາດອັມມະໂລກໃນໂລກ ຂອງອົງການອະນາໄມໂລກ ໃນການເຂົ້າເຖິງການບົ່ງມະຕິພະຍາດອັມມະໂລກ ແລະ ການປິ່ນປົວສຳລັບໝົດທຸກຄົນ. ອົງການກອງທຶນດາມຽນ ປະເທດແບນຊິກ ໄດ້ໃຫ້ການສະໜັບສະໜູນ ໂຄງການນັບຕັ້ງແຕ່ປີ 1995 ແລະ ໂຄງການກອງທຶນໂລກຕ້ານເອດ, ອັມມະໂລກ ແລະ ໄຂ້ຍຸງ ໂດຍຜ່ານ ຄະນະກຳມະການ ປະສານງານກອງທຶນໂລກ ພາຍໃຕ້ການໃຫ້ທຶນຊ່ວຍເຫຼືອຢ່າງຕໍ່ເນື່ອງນັບຕັ້ງແຕ່ປີ 2003. ໂຄງການແຫ່ງຊາດ ຕ້ານອັມມະໂລກ (ຜູ້ຮັບທຶນຍ່ອຍຂອງກອງທຶນໂລກ) ມີໜ້າທີ່ຮັບປະກັນ ໃນການປະສານງານ ກັບຫຼາຍອົງກອນທີ່ໄດ້ຮັບ ທຶນຍ່ອຍ ເຊັ່ນ: NIOPH, CICML ຫ້ອງວິເຄາະ ແລະ ອົງການທ້ອງຖິ່ນ ແລະ ອົງການ ຈັດຕັ້ງທີ່ບໍ່ສັງກັດລັດຖະບານ ທີ່ມີສ່ວນຮ່ວມ ໃນການຄວບຄຸມ ພະຍາດອັມມະໂລກ ໃນຂັ້ນຊຸມຊົນ. ໜ່ວຍງານວິຊາການ ຂອງພະຍາດອັມມະໂລກ ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ ຊຶ່ງລວມມີ ຄູ່ຮ່ວມງານທັງໝົດ ທີ່ເຮັດການຄວບຄຸມ ພະຍາດອັມມະໂລກ ແລະ ໄດ້ຈັດປະຊຸມຂຶ້ນໃນ ປີ 2011 ພາຍໃຕ້ການຕິດຕາມກວດກາຂອງ ຄະນະກຳມະການປະສານງານກອງທຶນໂລກ ໃນເວລາກະກຽມການສະເໜີຂໍທຶນຕໍ່ໃນໄລຍະ 2 ຂອງ Lao-T-GF MoH ໃນເດືອນ ກຸມພາ ປີ 2013. ອົງການຈັດຕັ້ງທີ່ມີສ່ວນຮ່ວມປະກອບດ້ວຍ: WHO, UNAIDS, IFMT, NTC, DFB, LAOPHA, MAAP, PEDA, SFE, ອົງການຊາວໜຸ່ມ ປະຊາຊົນ ປະຕິວັດລາວ.

ຄະນະກຳມະການປະສານງານກອງທຶນໂລກ (CCM) ຊຶ່ງໄດ້ຮັບການສະໜັບສະໜູນຈາກກອງທຶນໂລກເພື່ອຕ້ານກັບ 3 ພະຍາດ (ເຮສໄອວີ/ເອດ, ອັມມະໂລກ, ໄຂ້ຍຸງ) ເພື່ອຊຸກຍູ້ລັດຖະບານ ໃຫ້ສືບຕໍ່ຄວາມພະຍາຍາມ. ໜຶ່ງໃນຄວາມຮຽກຮ້ອງຕ້ອງການ ແມ່ນໃຫ້ມີການຈັດຕັ້ງໜ່ວຍງານທາງດ້ານວິຊາການ ເພື່ອຕິດຕາມກວດກາໂຄງການ ໂດຍມີຜູ້ຕາງໜ້າຈາກຫລາຍພາກສ່ວນ ທີ່ມີອິດທິພົນໃນການມີສ່ວນຮ່ວມທີ່ສຳຄັນຕໍ່ການໃຫ້ການສະໜັບສະໜູນທາງດ້ານວິຊາການ ດ້ວຍການໃຫ້ຄຳແນະນຳໃນການຈັດຕັ້ງປະຕິບັດໂຄງການ ເພື່ອຄວບຄຸມ ແລະ ຈຳກັດພະຍາດອັມມະໂລກໃນ ສປປ ລາວ ໃຫ້ມີປະສິດທິຜົນ.

ການສ້າງຕັ້ງຢ່າງເປັນທາງການ ຂອງໜ່ວຍງານວິຊາການຕ້ານພະຍາດອັມມະໂລກ ໃນປະຈຸບັນແມ່ນມີຄວາມຈຳເປັນເພື່ອໃຫ້ມີການປະກອບສ່ວນ ຂອງຄູ່ຮ່ວມງານທັງໝົດ ພາຍໃນປະເທດ ເພື່ອ ສົນທະນາປັບປຸງ ແຜນຍຸດທະສາດແຫ່ງຊາດ ຕ້ານພະຍາດອັມມະໂລກ, ຮັບປະກັນຜົນສຳເລັດຂອງການສະເໜີຂໍທຶນຊ່ວຍເຫລືອ ຕາມການສະໜອງທຶນຮູບແບບໃໝ່ ຂອງກອງທຶນໂລກ ແລະ ຮັກສາຄວາມຍືນຍົງໃນການປະກອບສ່ວນຈາກລັດຖະບານ ແລະ ຜູ້ໃຫ້ທຶນອື່ນໆ ເພື່ອຕ້ານພະຍາດອັມມະໂລກ ຢູ່ພາຍ ໃນປະເທດ.

## II. ຈຸດປະສົງ

ຈຸດປະສົງຕົ້ນຕໍ ຂອງໜ່ວຍງານວິຊາການ ຕ້ານພະຍາດອັມມະໂລກ ທີ່ມີຕົວຫຍໍ້ແມ່ນ TFTB, ຈະຊ່ວຍໃຫ້ກະຊວງສາທາລະນະສຸກ ບັນລຸເປົ້າໝາຍຍຸດທະສາດ, ແຜນງານແຫ່ງຊາດ ໃນການສະກັດກັ້ນ ແລະ ຕ້ານພະຍາດອັມມະໂລກ ແລະ ເປີດກ້ວາງການເຂົ້າເຖິງການບໍລິການ ທີ່ກ່ຽວຂ້ອງກັບພະຍາດອັມມະໂລກ ເພື່ອຫຼຸດຜ່ອນການເຈັບເປັນ ແລະ ການເສຍຊີວິດ ຂອງປະຊາຊົນ ຍ້ອນພະຍາດອັມມະໂລກ.

## III. ພາລະກິດ

1. ສົ່ງເສີມການເຊື່ອມໂຍງ/ການຮ່ວມມື ຂອງຫຼາຍຂະແໜງການ ໃນການສະກັດກັ້ນແລະຕ້ານພະຍາດວັນນະໂລກ, ການຕິດເຊື້ອຮ່ວມພະຍາດວັນນະໂລກ-ເຮສໄອວີ ແລະ ເຊື້ອທີ່ຕ້ານຕໍ່ຢາຂອງພະຍາດວັນນະໂລກ ໃນທຸກກຸ່ມປະຊາກອນ ແລະ ກຸ່ມທີ່ມີຄວາມສ່ຽງສູງ;
2. ການມີສ່ວນຮ່ວມໃນການອອກແບບຍຸດທະສາດຕ້ານພະຍາດວັນນະໂລກ, ການຈັດຕັ້ງປະຕິບັດ ແລະ ຕິດຕາມ ໂດຍຄູ່ຮ່ວມງານ ແລະ ຜູ້ທີ່ມີສ່ວນຮ່ວມ ລວມທັງປະຊາກອນທີ່ໄດ້ຮັບຜົນກະທົບຈາກພະຍາດວັນນະໂລກ ແລະ ພະຍາດວັນນະໂລກ-ເຮສໄອວີ;
3. ສ້າງຄວາມເຂັ້ມແຂງໃນການຮ່ວມມືພາຍໃນ, ຕ່າງປະເທດ ແລະ ການພົວພັນກັບສາກົນ ໃນການຄວບຄຸມພະຍາດວັນນະໂລກ ແລະ ພະຍາດວັນນະໂລກ-ເຮສໄອວີ;
4. ສົ່ງເສີມການສົນທະນາກ່ຽວກັບນະໂຍບາຍ ແລະ ອຳນວຍຄວາມສະດວກ ໃນການຈັດຕັ້ງ ຕາມຂໍ້ຕົກລົງຮ່ວມທີ່ສອດຄ່ອງກັບ ຍຸດທະສາດການຢຸດຢັ້ງພະຍາດວັນນະໂລກໃນທົ່ວໂລກ ຂອງອົງການອະນາໄມໂລກໃນປະຈຸບັນ ແລະ ຫລັກການລວມຂອງຍຸດທະສາດໃນການສະກັດກັ້ນ ແລະ ຕ້ານພະຍາດວັນນະໂລກໃນທົ່ວໂລກ ຫລັງຈາກປີ 2015.

## IV. ຍຸດທະສາດ:

1. ສ້າງຄວາມເຂັ້ມແຂງ ແລະ ເພີ້ມການຮ່ວມມືໃນລະດັບຊາດ ໃນການສະກັດກັ້ນ ແລະ ຕ້ານພະຍາດວັນນະໂລກ ແລະ ພະຍາດວັນນະໂລກ-ເຮສໄອວີ ເພື່ອຮັບປະກັນວ່າບັນຫາ ແລະ ຊ່ອງຫ່ວາງຕ່າງໆທີ່ສຳຄັນ ໄດ້ຖືກບັນຈຸເຂົ້າໃນແຜນວຽກງານລະດັບຊາດ.
2. ສົ່ງເສີມວຽກງານຂໍການສະໜັບສະໜູນ ແລະ ເສີມຂະຫຍາຍຄວາມຮັບຮູ້ໃນລະດັບຊາດ ກ່ຽວກັບສະພາບການຂອງພະຍາດວັນນະໂລກ, ພະຍາດວັນນະໂລກ-ເຮສໄອວີ ພ້ອມທັງບັນຫາຕ່າງໆທີ່ພົວພັນ;
3. ປັບປຸງການເຂົ້າເຖິງຂໍ້ມູນຂ່າວສານ ກ່ຽວກັບພະຍາດວັນນະໂລກ ແລະ ພະຍາດວັນນະໂລກ-ເຮສໄອວີ;
4. ສ້າງຄວາມເຂັ້ມແຂງດ້ານຄວາມສາມາດໃນລະດັບຊາດ ໃນການແກ້ໄຂບັນຫາທີ່ກ່ຽວຂ້ອງກັບພະຍາດວັນນະໂລກ ແລະ ພະຍາດວັນນະໂລກ-ເຮສໄອວີ ແລະ ຜົນສະທ້ອນຕໍ່ສຸຂະພາບ ຈາກການເຊື່ອມໂຍງຂອງເສດຖະກິດຢູ່ໃນພາກພື້ນ, ໂລກາວິວັດ, ການຄ້າເສລີ, ເຕັກໂນໂລຊີ ແລະ ນະວັດທະກຳທີ່ທັນສະໃໝ.

## V. ຂອບເຂດຂອງການເຮັດວຽກ:

ເພື່ອໃຫ້ສອດຄ່ອງກັບຈຸດປະສົງ ແລະ ຍຸດທະສາດທີ່ກ່າວມາຂ້າງເທິງນັ້ນ, ການເຮັດວຽກຂອງໜ່ວຍງານວິຊາການຕ້ານພະຍາດວັນນະໂລກ (TFTB)) ຈະຕ້ອງປະຕິບັດ ຕາມພາລະບົດບາດຂ້າງລຸ່ມນີ້:

1. ເພື່ອສ້າງ ແລະ ໃຫ້ຄຳແນະນຳແກ່ໂຄງການແຫ່ງຊາດ ຕ້ານພະຍາດວັນນະໂລກ ແລະ ພະຍາດວັນນະໂລກ-ເຮສໄອວີ ກ່ຽວກັບ ນະໂຍບາຍ, ຍຸດທະສາດ, ຂໍ້ແນະນຳ, ຄູ່ມື ແລະ ແຜນງານແຫ່ງຊາດ ໃນການສະກັດກັ້ນ ແລະ ຕ້ານພະຍາດວັນນະໂລກ ແລະ ພະຍາດວັນນະໂລກ-ເຮສໄອວີ;
2. ເພື່ອປັບປຸງແຜນຍຸດທະສາດແຫ່ງຊາດ ຕ້ານພະຍາດວັນນະໂລກ ແລະ ສອດຄ່ອງກັບຍຸດທະສາດຕ້ານພະຍາດວັນນະໂລກ ຂອງອົງການອະນາໄມໂລກ ແລະ ກອບແຜນຍຸດທະສາດ ຕ້ານພະຍາດວັນນະໂລກ ໃນທົ່ວໂລກຫຼັງຈາກປີ 2015;
3. ເພື່ອກວດກາເຖິງຄວາມຄືບໜ້າ, ຜົນສຳເລັດຂອງ ແຜນນະໂຍບາຍແຫ່ງຊາດ ຕ້ານພະຍາດວັນນະໂລກ ໂດຍການປະກອບຄຳຄິດຄຳເຫັນ, ໃຫ້ການຊ່ວຍເຫຼືອໃນການວາງແຜນການ, ຂໍ້ສະເໜີແນະໂດຍອົງການ, ການຈັດຕັ້ງ ແລະ ສະຖາບັນ ທີ່ເຮັດວຽກກ່ຽວກັບພະຍາດວັນນະໂລກ.

4. ເພື່ອກຳນົດການຈັດວາງໃນລະດັບຊາດ ຕໍ່ກັບບັນຫາທີ່ກ່ຽວຂ້ອງກັບພະຍາດວັນນະໂລກ ແລະ ພະຍາດວັນນະໂລກ/ເຮສໄອວີ ໂດຍສະເພາະແມ່ນການສ້າງບົດລາຍງານ/ເອກະສານ ຂອງ ວຽກງານແຫ່ງຊາດ ຕ້ານພະຍາດວັນນະໂລກ ແລະ ພະຍາດວັນນະໂລກ/ເຮສໄອວີ ແລະ ເພື່ອກະກຽມໃສ່ກອງປະຊຸມສາກົນ;
5. ເພື່ອສົ່ງເສີມ ການເຊື່ອມສານລະຫວ່າງຂະແໜງການພາຍໃນ ກັບບັນດາກະຊວງ ທີ່ກ່ຽວຂ້ອງ, ຄູ່ຮ່ວມງານພາຍໃນ ແລະ ສາກົນ ໂດຍຜ່ານສູນວັນນະໂລກ, ກະຊວງສາທາລະນະສຸກ;
6. ເສີມຂະຫຍາຍເຄືອຄ່າຍວັນນະໂລກ ແລະ ພະຍາດວັນນະໂລກ/ເຮສໄອວີ ຂອງສະຖາບັນສາທາລະນະສຸກ, ວິຊາການດ້ານສາທາລະນະສຸກສາດ, ໃນການສິດສອນ ແລະ ເຮັດການຄົ້ນຄວ້າກ່ຽວກັບພະຍາດວັນນະໂລກ ແລະ ພະຍາດວັນນະໂລກ/ເຮສໄອວີ;
7. ເສີມຂະຍາຍບົດບາດໃນການປູກຈິດສຳນຶກ ແລະ ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ຍຸດທະສາດ ແລະ ແຜນງານແຫ່ງຊາດ, ໂດຍມີເປົ້າໝາຍໃສ່ຂັ້ນລະດັບການນຳຂອງຂະແໜງການສາທາລະນະສຸກ, ວິຊາການດ້ານສາທາລະນະສຸກສາດ, ຄູ່ຮ່ວມງານ ແລະ ຜູ້ນຳທາງດ້ານການເມືອງ ໂດຍຜ່ານຫຼາຍຊ່ອງທາງເຊັ່ນ: ກອງປະຊຸມທາງດ້ານສາທາລະນະ ສຸກລະດັບຊາດ, ການສຳມະນາທາງດ້ານວິທະຍາສາດ, ເຄືອຄ່າຍຂອງສື່ມວນຊົນ ແລະ ສ່ວນບຸກຄົນ;
8. ປະກອບຄຳຄິດຄຳເຫັນໃສ່ເອກະສານຕ່າງໆ ທີ່ຈະສົ່ງໃຫ້ຄະນະກຳມະການກວດກາ/ຄະນະກຳມະການປະສານງານກອງທຶນໂລກ ເພື່ອພິຈາລະນາ.

## VI. ຂະບວນການ / ກົນໄກ

1. ສະມາຊິກຖາວອນຂອງໜ່ວຍງານວິຊາການຕ້ານພະຍາດວັນນະໂລກ ແມ່ນຜູ້ຕາງໜ້າທີ່ໄດ້ຖືກຄັດເລືອກຈາກກົມກອງ ແລະ ສະຖາບັນ ຂອງກະຊວງສາທາລະນະສຸກເຊັ່ນ: ກົມຄວບຄຸມພະຍາດຕິດຕໍ່, ກົມປິ່ນປົວ, ກົມອາຫານ ແລະ ຢາ, ກົມອະນາໄມ-ສົ່ງເສີມສຸຂະພາບ, ກົມແຜນການ ແລະ ຮ່ວມມືສາກົນ, ກົມກວດກາ, ສູນຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ, ສູນວິເຄາະ-ລະບາດວິທະຍາ, ສູນວັນນະໂລກ, ສູນແມ່ ແລະ ເດັກ, ສູນຂ່າວສານການແພດ, ແລະ ຫ້ອງການຜູ້ຮັບທຶນຫຼັກຂອງກອງທຶນໂລກ. ອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ ຈະໄດ້ຮັບການເຊື້ອເຊີນ ໃຫ້ເຂົ້າຮ່ວມໃນກອງປະຊຸມສາມັນ ໃນກໍລິນີທີ່ເຫັນວ່າມີຄວາມຈຳເປັນ ເຊັ່ນ: UNAIDS, UNICEF, UNODC, WHO, DFB, IOM, LaoPHA, NCA, PEDA, PSI, ເຄືອຄ່າຍ PLHIV.
2. ໜ່ວຍງານວິຊາການຕ້ານພະຍາດວັນນະໂລກ ຄວນຈະປະຊຸມປະຈຳໄຕມາດ ແລະ ສາມາດຈັດຕັ້ງກອງປະຊຸມວິສາມັນ ແລະ ຮຽກປະຊຸມດ່ວນໄດ້ ຫາກເຫັນວ່າມີຄວາມຈຳເປັນ.
3. ປະທານຈະຖືກຄັດເລືອກໃນແຕ່ລະປີ ໂດຍສະມາຊິກທັງໝົດຂອງໜ່ວຍງານວິຊາການ (ຢ່າງໜ້ອຍ 2/3 ຂອງສະມາຊິກທັງໝົດຕ້ອງໄດ້ເຂົ້າຮ່ວມ) ແລະ ຮັບຜິດຊອບໃນການຈັດປະຊຸມ ແລະ ລາຍງານໃຫ້ ຄະນະກຳມະການ ປະສານງານ ກອງທຶນໂລກ, ກົມຄວບຄຸມພະຍາດຕິດຕໍ່, ກະຊວງ ສາທາລະນະສຸກ.
4. ສູນວັນນະໂລກ, ກະຊວງສາທາລະນະສຸກ ຄວນຈະເປັນກອງເລຂາຂອງ ໜ່ວຍງານວິຊາການຕ້ານພະຍາດວັນນະໂລກ. ຈະເປັນຜູ້ສົ່ງບັດເຊີນ, ກະກຽມເອກະສານຂອງກອງປະຊຸມ, ວາລະຂອງກອງປະຊຸມ, ບົດບັນທຶກກອງປະຊຸມ ແລະ ກະກຽມບົດລາຍງານຜົນຂອງກອງປະຊຸມ ແລະ ຮັບຜິດຊອບທາງ ດ້ານການບໍລິຫານຕ່າງໆສຳລັບຄະນະກຳມະການ.

*********

# ຕົວອັກສອນຫຍໍ້

| | |
|---|---|
| CICML | ສູນວິໄຈພະຍາດຊຶມເຊື້ອ ຄຣິສຕົບ ເມຣິເອີ ຢູ່ ສປປ ລາວ |
| IFMT | ສະຖາບັນພະຍາດເຂດຮ້ອນຝຣັ່ງໂກໂຟນີ |
| IOM | ອົງການຈັດຕັ້ງສາກົນສໍາລັບແຮງງານເຄື່ອນຍ້າຍ |
| DFB | ກອງທຶນ ດານຽນ ປະເທດແບນຊິກ |
| LAOPHA | ສະມາຄົມ ຜູ້ຕິດເຊື້ອ ໃນລາວ |
| LYU | ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ |
| MAAP | ສະມາຄົມ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ  ແຂວງ ອັດຕະປື |
| NCLE | ສູນວິເຄາະ-ລະບາດວິທະຍາ |
| NTC | ສູນວັນນະໂລກ, ກະຊວງສາທາລະນະສຸກ |
| PEDA | ສະມາຄົມສົ່ງເສີມ ພັດທະນາການສຶກສາ |
| PSI | ອົງການສາກົນເພື່ອການບໍລິການປະຊາຊົນ |
| SFE | ອົງການຊ່ວຍເຫຼືອຊຶ່ງກັນ ແລະ ກັນ |